**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ 8251---4

ກົມປູກຝັງ ເລກທີ /ກປຝ

ນະຄອນຫຼວງວຽງຈັນ, ວັນທີ 11 DEC 2024

# ຄຳແນະນຳ
## ກ່ຽວກັບ ເງື່ອນໄຂສຸຂານາໄມພືດ ສຳລັບການສົ່ງອອກ ກາກອ້ອຍ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ ສະບັບເລກທີ 0078/ກປ, ລົງວັນທີ 12 ມັງກອນ 2022;
- ອີງຕາມ ໜັງສື ຈາກກົມວິຊາການກະເສດ ຣາຊະອານາຈັກໄທ ກ່ຽວກັບການນຳເຂົ້າ ກາກອ້ອຍ ຈາກ ສປປ ລາວ ໄປ ປະເທດໄທ ສະບັບເລກທີ AC 0914/3691, ລົງວັນທີ 04 ກໍລະກົດ 2024.

ໃນໄລຍະຜ່ານມາ ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມການຜະລິດພືດເປັນສິນຄ້າ ເຮັດໃຫ້ມີການແລກປ່ຽນຄ້າຂາຍຜະລິດຕະພັນສິນຄ້າກະສິກຳ ກັບພາກພື້ນ ແລະ ສາກົນ ນັບມື້ນັບເພີ່ມຂຶ້ນ. ໃນນັ້ນ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເຈລະຈາດ້ານສຸຂານາໄມພືດ ກົມວິຊາການກະເສດ ຣາຊະອານາຈັກໄທ ກ່ຽວກັບການສົ່ງອອກ ກາກອ້ອຍ (Bagasse) ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ໂດຍໄດ້ສຳເລັດຂໍ້ກຳນົດເງື່ອນໄຂສຳລັບການນຳເຂົ້າ ຂອງ ຣາຊະອານາຈັກໄທ ວັນທີ 04 ກໍລະກົດ 2024 ໃນປັດຈຸບັນ ພື້ນທີ່ ການປູກອ້ອຍ ມີການຂະຫຍາຍຕົວຢ່າງກວ້າງຂວາງເຊິ່ງສາມາດ ສ້າງລາຍຮັບໃຫ້ປະຊາຊົນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໄດ້ເປັນຢ່າງດີ.

ສະນັ້ນ, ເພື່ອໃຫ້ການຄຸ້ມຄອງການຜະລິດ ແລະ ການສົ່ງອອກ ກາກອ້ອຍ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ໃຫ້ສອດຄ່ອງກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການສົ່ງອອກ ກາກອ້ອຍ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ພ້ອມທັງ ກົດໝາຍ, ລະບຽບຫຼັກການ ແລະ ສົນທິສັນຍາການປ້ອງກັນພືດສາກົນ ທີ່ ສປປ ລາວ ແລະ ຣາຊະອານາຈັກໄທ ເປັນພາຄີທັນນັ້ນ:

## ກົມປູກຝັງ ອອກຄຳແນະນຳ:

### I. ຈຸດປະສົງ

- ເພື່ອປະຕິບັດຕາມ ຂໍ້ກຳນົດເງື່ອນໄຂສຸຂານາພືດ ສຳລັບ ການສົ່ງອອກ ກາກອ້ອຍ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ;
- ເພື່ອກຳນົດ ຂັ້ນຕອນ ແລະ ວິທີການປະຕິບັດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການສົ່ງອອກ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.



Scanned with CamScanner

## II. ເງື່ອນໄຂດ້ານສຸຂານາໄມພືດ ສຳລັບ ການສົ່ງອອກ ກາກອ້ອຍ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ

### 1. ອ້ອຍ ທີ່ຈະສົ່ງອອກ

ອ້ອຍ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ ພາຍໃຕ້ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຕ້ອງເປັນ ຊະນິດພັນ ອ້ອຍ ມີຊື່ວິທະຍາສາດ *Sugarcane, Saccharum officinarum* ແລະ ເປັນ ກາກອ້ອຍ (Bagasse) ທີ່ ໄດ້ຜ່ານຂະບວນການຜະລິດນ້ຳຕານມາແລ້ວ.



### 2. ສັດຕູພືດກັກກັນ ແລະ ວັດຖຸຕ້ອງຄວບຄຸມ

2.1. ກາກອ້ອຍ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ ຕ້ອງປາດສະຈາກ ແມງໄມ້, ທີ່ມີຊີວິດ ຫຼື ສິ່ງທີ່ມີຊີວິດອື່ນທີ່ມີຈະສາມາດເປັນສັດຕູພືດກັກກັນ ຂອງຣາຊະອານາຈັກໄທໄດ້ ແລະ ມີການເຈືອປົນ ຂອງດິນຊາຍ ແລະ ສິ້ນສ່ວນຂອງພືດເຊັ່ນ: ເມັດພືດ, ໃບ, ກ້ານ, ເຊດຂອງພືດເປັນຕົ້ນ ຫຼື ສິ່ງອື່ນໆທີ່ຈະ ຕິດແປດໄປ ແລະ ສາມາດເປັນສັດຕູພືດກັກກັນໄດ້;

| ລ/ດ | ຊື່ພາສາລາວ | ຊື່ສາມັນ | ລັກສະນະຮູບຮ່າງ | ຮູບພາບປະກອບ |
|---|---|---|---|---|
| 1. | ດິນ, ດິນຊາຍ | Sandy, soil | ສ່ວນໃດ ສ່ວນໜຶ່ງຂອງ ດິນ, ດິນຊາຍ ທີ່ຈະຕິດໄປນຳພືດ |  |
| 2. | ເມັດພືດ, ໃບພືດ, ເສດພືດ | Seed, weed other contamination | ສ່ວນໃດ ສ່ວນໜຶ່ງຂອງ ພືດ ຫຼື ເມັດພັນພືດ |   |

2.2. ຕ້ອງຂົນສົ່ງສິນຄ້າໃນຕູ້ຂົນສົ່ງສິນຄ້າ ຫຼື ຂົນສົ່ງໃນສ່ວນລົດບັນທຸກພາຫະນະ ໃນກໍລະນີນີ້ລົດບັນທຸກຕ້ອງ ເປັນຕູ້ທຶບ, ຖ້າເປັນລົດກະບະຕ້ອງປົດຄຸມໃຫ້ແຈບດີ ເພື່ອຮັກສາຄວາມປອດໄພດ້ານສຸຂານາໄມພືດ ທັງນີ້ ກ່ອນການດຳເນີນຂົນຍ້າຍຊຸດສິນຄ້າ ກົມປູກຝັງ, ຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ຕ້ອງກວດ



Scanned with CamScanner

ຮອບໃຫ້ແນ່ໃຈວ່າຕູ້ຂົນສົ່ງສິນຄ້າ ຫຼື ລົດບັນທຸກສິນຄ້າ ສະອາດ, ປາດສະຈາກ ດິນຊາຍ ແລະ ຊິ້ນສ່ວນຂອງພືດ ຫຼື ສິ່ງອື່ນທີ່ຈະສາມາດຕິດແປດໄປນຳໄດ້;

2.3. ການສົ່ງອອກ ກາກອ້ອຍ ໄປ ຣາຊະອານາຈັກໄທ ຕ້ອງມີໃບຢັ້ງຢືນສຸຂານາໄມພືດ ຕົ້ນສະບັບ ຕິດຕິດໄປກັບຮູດສິນຄ້າ ທີ່ອອກໂດຍອົງການປ້ອງກັນພືດແຫ່ງຊາດ ກົມປູກຝັງ, ຂະແໜງປູກຝັງປະຈຳແຂວງ ແລະ ນະຄອນຫຼວງ ຂອງ ສປປ ລາວ ແລະ ໃຫ້ສອດຄ່ອງກັບເງື່ອນໄຂການນຳເຂົ້າ ດ້ານສຸຂານາໄມພືດ ຂອງ ຣາຊະອານາຈັກໄທ.

## 3. ການຂຶ້ນທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນ ຫຼື ຂໍຕໍ່ໃບທະບຽນ ສວນປູກ ແລະ ໂຮງເຮືອນຫຸ້ມຫໍ່ບັນຈຸ ແມ່ນປະຕິບັດຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ປະກາດໃຊ້ແຕ່ລະໄລຍະ ໂດຍຍື່ນຄຳຮ້ອງເຖິງກົມປູກຝັງຂອງທຸກປີ.

- ❖ ການປະກອບເອກະສານ ຄຳຮ້ອງຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ປະກອບມີ:

1) ໃບຄຳຮ້ອງ ຕາມແບບພິມທີ່ກົມປູກຝັງກຳນົດ;
2) ສຳເນົາ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້;
3) ສຳເນົາ ໃບທະບຽນວິສາຫະກິດ;
4) ສຳເນົາ ໃບຢັ້ງຢືນການມອບພັນທະອາກອນປະຈຳປີສຸດທ້າຍ;
5) ໜັງສື ຢັ້ງຢືນແຈ້ງລົງທະບຽນ ເພື່ອເປີດ ຫຼື ຫັນເປັນບັນຊີເງິນຝາກ ກ່ຽວກັບການນຳເຂົ້າ-ສົ່ງອອກ;
6) ຄູ່ມື ດຳເນີນງານ ກ່ຽວກັບ ການຈັດການດ້ານສຸຂານາໄມ ແລະ ສຸຂານາໄມພືດ;
7) ໃບມອບສິດ ແລະ ສຳເນົາບັດປະຈຳຕົວຂອງຜູ້ຍື່ນເອກະສານ ໃນກໍລະນີໃຫ້ຜູ້ອື່ນຍື່ນຄຳຮ້ອງແທນ.

ອາຍຸຂອງໃບທະບຽນນຳໃຊ້ໄດ້ ໜຶ່ງ ປີ ແລະ ສາມາດຂໍຕໍ່ໄດ້ ຜູ້ທີ່ໄດ້ຮັບຂຶ້ນທະບຽນ ແລະ ຮັບຮອງໃຫ້ເປັນຜູ້ສົ່ງອອກ ຈະຖືກເຜີຍແຜ່ ໃນເວັບໄຊ ຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງມີຂໍ້ມູນຊື່, ທີ່ຢູ່ ແລະ ເລກລະຫັດ.

## 4. ໜ່ວຍງານຮັບຜິດຊອບ

1) ຝ່າຍ ລາວ ຄື: ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບມອບໝາຍໃນການເປັນອົງການປ້ອງກັນພືດແຫ່ງຊາດ (NPPO) ຢ່າງເປັນທາງການ ຂອງ ສປປ ລາວ;
2) ຝ່າຍ ຣາຊະອານາຈັກໄທ ຄື: ກົມວິຊາການກະເສດ ຣາຊະອານາຈັກໄທ.

## 5. ມາດຕະການກ່ອນການສົ່ງອອກ

5.1. ຕ້ອງມີຕ້ອງມີໃບອະນຸຍາດນຳເຂົ້າຊຶ່ງອອກໃຫ້ໂດຍກົມວິຊາການກະເສດ ຣາຊະອານາຈັກໄທ, ໂດຍຜູ້ນຳເຂົ້າຢູ່ ຣາຊະອານາຈັກໄທ ຕ້ອງປະຕິບັດຕາມປະກາດຂອງກົມວິຊາການກະເສດເລື່ອງ: ເງື່ອນໄຂການນຳເຂົ້າກາກອ້ອຍ ເພື່ອເປັນເຊື້ອເພີງໃນການຜະລິດພະລັງງານໄຟຟ້າ ຈາກ ສປປ ລາວ, ລົງວັນທີ 02 ມິຖຸນາ 2567, ເວບໄຊຂອງກົມວິຊາການກະເສດປະເທດໄທ (www.doa.go.th);

5.2. ຕ້ອງມີໃບຢັ້ງຢືນສຸຂານາໄມພືດ ອອກໃຫ້ໂດຍກົມປູກຝັງ, ຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ຊຶ່ງເອກະສານປະກອບເພື່ອສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ມີດັ່ງນີ້:

1) ໃບຄຳຮ້ອງແບບຟອມ ກກພ 01, ກກພ 01.1 ແລະ ແບບຟອມ ກກພ 02;
2) ກະກຽມຮູດສິນຄ້າພືດ, ພາຊະນະບັນຈຸຫຸ້ມຫໍ່ຕ້ອງແຂງແຮງ ແລະ ເໝາະສົມທີ່ຈະສົ່ງອອກ ໃຫ້ສອດຄ່ອງ ແລະ ປະຕິບັດຕາມເງື່ອນໄຂນຳເຂົ້າຂອງປະເທດຄູ່ຄ້າ;



Scanned with CamScanner

3) ແຈ້ງບັນຊີລາຍຊື່ພືດສົ່ງອອກໃນແຕ່ລະພາຊະນະຫຸ້ມຫໍ່ຕ່າງໆໃຫ້ຖືກຕ້ອງກັບປະເພດ, ຊະນິດ ແລະ ປະລິມານ ໃຫ້ຖືກຕ້ອງ;

4) ບໍ່ໃຫ້ມີພືດອື່ນ ຫຼື ວັດຖຸຕ່າງໆປົນ ທີ່ບໍ່ຖືກຕ້ອງກັບບັນຊີລາຍຊື່ພືດສົ່ງອອກ ໃນໃບຄໍາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ;

5) ເອກະສານອື່ນທີ່ກ່ຽວຂ້ອງ.

5.3. ວິທີການຂົນສົ່ງ

1) ກາກອ້ອຍ ຕ້ອງຖືກສົ່ງມາຈາກດ່ານແຫ່ງໜຶ່ງ ຂອງ ສປປ ລາວ ໄປຍັງ ດ່ານປາຍທາງໃນ ຣາຊະອານາຈັກໄທ ຂົນສົ່ງທາງບົກ ແລະ ຕ້ອງນໍາເຂົ້າ ກາກອ້ອຍ ເຂົ້າທາງດ່ານກັກກັນພືດນຸກດາຫານ;

2) ສໍາລັບຕູ້ຂົນສົ່ງສິນຄ້າ ຫຼື ການຂົນສົ່ງ ດ້ວຍລົດບັນທຸກ ໃນກໍລະນີເປັນລົດບັນທຸກຕ້ອງເປັນຕູ້ທີ່ປິດແຈບດີ, ຖ້າເປັນລົດກະບະຕ້ອງປົດຄຸມໃຫ້ແຈບດີ ເພື່ອຮັກສາຄວາມປອດໄພດ້ານສຸຂານາໄມພືດ.

## 6. ການກວດກາປະເມີນກ່ອນການສົ່ງອອກ

1) ກົມວິຊາການກະເສດ ຂອງຣາຊະອານາຈັກໄທ ແມ່ນຈະສົ່ງພະນັກງານວິຊາການ ມາກວດປະເມີນວິທີການຮັບຮອງ ການສົ່ງອອກ ກາກອ້ອຍ ຂອງ ສປປ ລາວ ກ່ອນທີ່ຈະອະນຸຍາດໃຫ້ນໍາເຂົ້າ ມາຍັງ ຣາຊະອານາຈັກໄທ ແລະ ຄ່າໃຊ້ຈ່າຍໃນການກວດກາປະເມີນດັ່ງກ່າວແມ່ນເປັນຄວາມຮັບຜິດຊອບຂອງທາງ ບໍລິສັດຜູ້ປະກອບການສົ່ງອອກ;

2) ໃນກໍລະນີ ຖືກຢຸດຕິການນໍາເຂົ້າ ຫຼື ເກີດເຫດຜິດປົກກະຕິ ທາງກົມວິຊາການກະເສດ ມີຄໍາເຫັນວ່າການກວດປະເມີນວິທີການຮັບຮອງການສົ່ງອອກດັ່ງກ່າວມີຄວາມຈໍາເປັນ ຕ້ອງມາກວດປະເມີນຄືນ ການຮັບຮອງການສົ່ງອອກໃນ ສປປ ລາວ ກ່ອນຕັດສິນໃຈ ໃຫ້ມີການເລີ່ມຕົ້ນນໍາເຂົ້າໃໝ່ ໂດຍທາງບໍລິສັດຜູ້ປະກອບການສົ່ງອອກ ຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍການກວດປະເມີນທັງໝົດ.

## 7. ຂໍ້ກໍານົດ ຢູ່ດ່ານຂາເຂົ້າ

1) ເມື່ອຊຸດສິນຄ້າ ກາກອ້ອຍ ຈາກ ສປປ ລາວ ມາເຖິງດ່ານຂາເຂົ້າ ຂອງ ຣາຊະອານາຈັກໄທ, ເຈົ້າຂອງຊຸດສິນຄ້າ ຕ້ອງແຈ້ງເອກະສານ ຕໍ່ເຈົ້າໜ້າທີ່ກັກກັນພືດ ຂອງ ຣາຊະອານາຈັກໄທ ເພື່ອດໍາເນີນການກວດກາເອກະສານທີ່ກ່ຽວຂ້ອງ ແນບມາກັບຊຸດສິນຄ້າ;

2) ພະນັກງານວິຊາການຈະກວດກາ ເພື່ອຢັ້ງຢືນວ່າສິນຄ້າທີ່ນໍາເຂົ້າມາຂອດຄ່ອງ ຕາມຂໍ້ກໍານົດດ້ານສຸຂານາໄມພືດຫຼືບໍ່ ຖ້າຫາກກວດພົບສັດຕູພືດ ຫຼື ສິ່ງທີ່ມີຊີວິດອື່ນ ຈະສົ່ງຕົວຢ່າງໄປຍັງຫ້ອງວິໄຈເພື່ອກວດຈໍາແນກຊະນິດ ແລະ ຕ້ອງໄດ້ກັກສິນຄ້າ ກາກອ້ອຍໄວ້ຈົນກ່ວາຈະຮູ້ຜົນຈາກຫ້ອງວິໄຈ;

3) ໃນກໍລະນີກວດພົບສັດຕູພືດທີ່ມີຊີວິດ ຫຼື ສິ່ງທີ່ມີຊີວິດອື່ນ, ສິ່ງປົນເປື້ອນທີ່ມີຜົນຕໍ່ການກໍ່ໃຫ້ເກີດຄວາມສ່ຽງດ້ານສຸຂານາໄມພືດ ຕໍ່ ຣາຊະອານາຈັກໄທ ຕ້ອງໄດ້ຈັດການສັດຕູພືດ, ສິ່ງທີ່ມີຊີວິດອື່ນໆ ຫຼື ສິ່ງປົນເປື້ອນ ເຫຼົ່ານັ້ນດ້ວຍວິທີທີ່ເໝາະສົມ (ຖ້າມີ) ຫຼື ສົ່ງອອກໄປນອກ ຣາຊະອານາຈັກໄທ ໂດຍຄ່າໃຊ້ຈ່າຍທັງໝົດແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງສິນຄ້າ ກົມວິຊາການກະເສດ ຣາຊະອານາຈັກໄທ ອາດຈະຍົກເລີກການນໍາເຂົ້າ ກາກອ້ອຍ ຈາກເສັ້ນທາງທີ່ລະບຸໄວ້ເປັນການຊົ່ວຄາວ ຈົນກ່ວາຈະມີວິທີການແກ້ໄຂ ຄໍາເຫັນການປະເມີນຄວາມສ່ຽງສັດຕູພືດ ຕໍ່ສິ່ງທີ່ມີຊີວິດທີ່ກວດພົບ.

## III. ການຈັດຕັ້ງປະຕິບັດ

1) ໃຫ້ພະແນກກັກກັນພືດ, ຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ເປັນເຈົ້າການ ປະສານສົມທົບກັບຂະແໜງ ການອື່ນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ໄດ້ຮັບຜົນດີ;



Scanned with CamScanner

2) ໃຫ້ພະແນກກັກພືດ ປະສານສົມທົບກັບຂະແໜງປູກຝັງ ແຂວງ ແລະ ນະຄອນຫຼວງ ເພື່ອກວດກາ ແລະ ປະເມີນຄວາມສ່ຽງສັດຕູພືດ ສະຖານທີ່ປະກອບການຜະລິດ ໃນແຕ່ລະຊ່ວງລະດູການຜະລິດ ພ້ອມສົ່ງລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ສະເໜີສົ່ງອອກ ກາກອ້ອຍ ທີ່ຈັດຕັ້ງປະຕິບັດຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ທີ່ກຳນົດໂດຍ ກົມວິຊາການກະເສດ ຣາຊະອານາຈັກໄທ ຕາມແຕ່ລະໄລຍະ;

3) ໃຫ້ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບກົມປູກຝັງ ຊຸກຍູ້ຕິດຕາມບັນດາບໍລິສັດ ໃນການຈັດຕັ້ງປະຕິບັດ ການປ້ອງກັນ ແລະ ກຳຈັດສັດຕູພືດໃນສວນອ້ອຍ, ຕິດຕາມເຝົ້າລະວັງສັດຕູພືດ ຢູ່ສວນປູກ, ການນຳໃຊ້ປັດໃຈການຜະລິດ (ແນວພັນ, ຝຸ່ນ, ຢາປາບສັດຕູພືດ ແລະ ເຄື່ອງມືອຸປະກອນຮັບໃຊ້ການຜະລິດ) ແລະ ມາດຕະການ ຫຼຸດຜ່ອນຄວາມສ່ຽງການຕິດແປດສັດຕູພືດກັກກັນ ຂອງ ຣາຊະອານາຈັກໄທ ທີ່ກຳນົດໄວ້ ຂອງຄຳແນະນຳສະບັບນີ້ ພ້ອມທັງລາຍງານໃຫ້ ກົມປູກຝັງ ຊາບເປັນແຕ່ລະໄລຍະ;

4) ໃຫ້ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ແລະ ສາຍຕັ້ງຂອງກົມ ສະຫຼຸບລາຍງານ ກ່ຽວກັບ ການສົ່ງອອກກາກອ້ອຍ ຈາກສປປ ລາວ ໄປ ຣາຊະອານາຈັກໄທ ໃຫ້ກົມປູກຝັງ ຊາບ ເປັນແຕ່ລະໄລຍະ;

5) ໃຫ້ເຈົ້າໜ້າທີ່ກັກກັນພືດ ເຂັ້ມງວດໃນການກວດກາ ແລະ ປັ້ງປັນສຸຂານາໄມພືດ ການສົ່ງອອກ ກາກອ້ອຍ ຕາມຫຼັກວິຊາການ;

6) ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ຣີບຮ້ອນລາຍງານ ກົມປູກຝັງ ຕາມຂັ້ນຕອນ ເພື່ອພິຈາລະນາ ຫາວິທີແກ້ໄຂຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

**ບຸນຈັນ ກົມບຸນຍະສິດ**



Scanned with CamScanner